ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ແຂວງ ໄຊຍະບູລີ

ເລກທີ 978/ຈຂ.ຊຍ

ໄຊຍະບູລີ, ວັນທີ 13.9.2017

# ຂໍ້ຕົກລົງ

## ວ່າດ້ວຍການປະຢັດລາຍຈ່າຍງົບປະມານຂອງລັດ.

---

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງສປປລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ພາກທີ III, ໝວດທີ IV, ມາດຕາ 20 ວ່າດ້ວຍສິດ, ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນ.
- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດສະບັບປັບປຸງ ເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015.
- ອີງຕາມ ດຳລັດ ວ່າດ້ວຍຕຳແໜ່ງບໍລິຫານຂອງພະນັກງານ - ລັດຖະກອນ ສະບັບເລກທີ 203/ລບ, ລົງວັນທີ 04 ກໍລະກົດ 2017.
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 09/ນຍ,ລົງວັນທີ 19/05/2017 ວ່າດ້ວຍການປະຢັດລາຍຈ່າຍງົບປະມານຂອງລັດ.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍກຳນົດໝາຍໃຊ້ຈ່າຍ ງົບປະມານບໍລິຫານຂອງລັດ ສະບັບເລກທີ 2066/ກງ, ລົງວັນທີ 25 ມິຖຸນາ 2015. ມາດຕາ 14 ຂໍ້ 14.4.

## ເຈົ້າແຂວງໄຊຍະບູລີ ຕົກລົງ

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ.**

- ເພື່ອເປັນບ່ອນອີງໃຫ້ແກ່ບັນດາພະແນກການ, ສະພາປະຊາຊົນ, ສານປະຊາຊົນ, ອົງການໄອຍະການປະຊາຊົນ,ທະຫານ, ຕຳຫຼວດ, ອົງການທຽບເທົ່າ ອ້ອມຂ້າງແຂວງ ແລະ ບັນດາເມືອງ ໃນການສ້າງແຜນ ແລະ ຈັດຕັ້ງປະຕິບັດ ຄຸ້ມຄອງລາຍຈ່າຍງົບປະມານຂອງລັດ, ເງິນຊ່ວຍເຫຼືອຈາກຕ່າງ ປະເທດ ແລະ ການລະດົມທຶນພາຍໃນທີ່ລັດຄຸ້ມຄອງໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວແຂວງ

- ເພື່ອເປັນການຕອບສະໜອງ ລາຍຈ່າຍງົບປະມານ ໃຫ້ສົມຄູ່ກັບຄວາມອາດສາມາດ ເກັບລາຍຮັບ ແລະ ຕົວເລກອານຸມັດຈາກສະພາທີ່ໄດ້ຮັບຕົວຈິງ.
- ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດ ໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນ ໃຫ້ມີຄວາມຮັບຜິດຊອບສູງ.
- ເພື່ອເຮັດໃຫ້ກົງຈັກບໍລິຫານລັດ ເຄື່ອນໄຫວຢ່າງເປັນປົກກະຕິ ແລະ ຮັບປະກັນໃຫ້ແກ່ການປົກປັກຮັກສາ, ນຳໃຊ້ຊັບສິນ ແລະ ຄຸ້ມຄອງໃຊ້ຈ່າຍງົບປະມານຂອງລັດຢ່າງປະຢັດ ແລະ ມີປະສິດທິຜົນສູງ.

**ມາດຕາ 2 ອະທິບາຍຄຳສັບ.**

ຄຳສັບຕ່າງໆ ທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ການປະຢັດ:** ໝາຍເຖິງການນຳໃຊ້ງົບປະມານຂອງລັດ, ທຶນ ແລະ ຊັບສິນຂອງລັດ, ແຮງງານ, ເວລາລັດຖະການ, ຊັບພະຍາກອນທຳມະຊາດ, ພະລັງງານ ແລະ ອື່ນໆທີ່ມີຢູ່ຢ່າງຈຳກັດໃຫ້ມີປະສິດທິຜົນສູງສຸດ ໂດຍນຳໃຊ້ແຫຼ່ງຊັບພະຍາກອນທີ່ກ່າວມານັ້ນ ໃນອັດຕາທີ່ຕ່ຳກວ່າກຳນົດໝາຍ, ມາດຕະຖານ ແລະ ລະດັບທີ່ໄດ້ກຳນົດໄວ້, ແຕ່ຍັງສາມາດເຮັດໃຫ້ວຽກງານບັນລຸໄດ້ຕາມເປົ້າໝາຍ.
2. **ທຶນຂອງລັດ:** ໝາຍເຖິງທຶນຈາກງົບປະມານຂອງລັດ, ທຶນຊ່ວຍເຫຼືອເພື່ອການພັດທະນາ, ທຶນສິນເຊື່ອທີ່ ລັດຄ້ຳປະກັນ, ທຶນຂອງລັດວິສາຫະກິດ, ທຶນຂອງວິສາຫະກິດທີ່ລັດຮ່ວມທຶນ ແລະ ທຶນອື່ນໆທີ່ລັດຄຸ້ມຄອງ.
3. **ການຟູມເຟືອຍ:** ໝາຍເຖິງການນຳໃຊ້ງົບປະມານຂອງລັດ, ທຶນ ແລະ ຊັບສິນຂອງລັດ, ແຮງງານ, ເວລາລັດຖະການ, ຊັບພະຍາກອນທຳມະຊາດ, ພະລັງງານ ແລະ ອື່ນໆ ເກີນກຳນົດໝາຍ ແລະ ມາດຕະຖານທີ່ໄດ້ກຳນົດໄວ້ ແລະ ບໍ່ມີປະສິດທິຜົນ.
4. **ລາຍຈ່າຍງົບປະມານຂອງລັດ:** ໝາຍເຖິງລາຍຈ່າຍງົບປະມານບໍລິຫານ ແລະ ລາຍຈ່າຍລົງທຶນ ຈາກງົບປະມານຂອງລັດ ແລະ ທຶນຊ່ວຍເຫຼືອລ້າເພື່ອພັດທະນາ (ເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ) ຂອງອົງການຈັດຕັ້ງລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ທີ່ກຳນົດໄວ້ຢູ່ໃນແຜນງົບປະມານແຫ່ງລັດ ຊຶ່ງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງໄດ້ຮັບຮອງເອົາໃນແຕ່ລະປີ.

**ມາດຕາ 3 ແຫຼ່ງທຶນທີ່ນຳໃຊ້.**

ແຫຼ່ງທຶນທີ່ນຳໃຊ້ປະກອບມີ 3 ແຫຼ່ງ:

1. ລາຍຮັບງົບປະມານພາຍໃນແຂວງ, ເມືອງ ແລະ ດຸ່ນດ່ຽງຈາກສູນກາງ.
2. ເງິນກູ້ຢືມ ແລະ ເງິນຊ່ວຍເຫຼືອລ້າຈາກຕ່າງປະເທດ.
3. ເງິນປະກອບສ່ວນຈາກອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ທັງພາຍໃນ ແລະ ຕ່າງປະເທດ, ວິສາຫະກິດຕ່າງໆ, ການປະກອບສ່ວນຂອງປະຊາຊົນ ແລະ ລາຍຮັບອື່ນໆ

**ມາດຕາ 4 ຂອບເຂດການນຳໃຊ້.**

1. ພະແນກການ, ສະພາປະຊາຊົນ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ທະຫານ, ຕໍາຫຼວດ, ອົງການທຽບເທົ່າ, ຂະແໜງການຢູ່ຂັ້ນແຂວງ ແລະ ບັນດາເມືອງທົ່ວແຂວງ.
2. ຫົວໜ່ວຍອົງການບໍລິຫານວິຊາການ, ກອງທຶນຕ່າງໆຂອງລັດ, ບັນດາໂຄງການທີ່ນໍາໃຊ້ເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດຢູ່ຂັ້ນແຂວງ ແລະ ເມືອງ.

## ໝວດທີ 2

## ການຈັດຕັ້ງປະຕິບັດການປະຢັດລາຍຈ່າຍງົບປະມານຂອງລັດ

**ມາດຕາ 5 ການຈັດຕັ້ງປະຕິບັດການປະຢັດລາຍຈ່າຍງົບປະມານຂອງລັດ.**

1. ພະແນກການ, ສະພາປະຊາຊົນ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ທະຫານ, ຕໍາຫຼວດ, ອົງການທຽບເທົ່າ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອໍານວຍການລັດວິສາຫະກິດ ແລະ ບັນດາເມືອງພາຍໃນແຂວງ ເອົາໃຈໃສ່ຈັດຕັ້ງປະຕິບັດນະໂຍບາຍປະຢັດແຫ່ງຊາດເຂົ້າໃນວຽກງານຂອງຕົນ ໃນການນໍາໃຊ້ງົບປະມານ, ທຶນ, ຊັບສິນ ແລະ ເວລາທາງລັດຖະການຢ່າງເຂັ້ມງວດ, ເຄັ່ງຄັດປະຕິບັດແຜນງົບປະມານແຫ່ງລັດ ຕາມທີ່ສະພາແຫ່ງຊາດຮັບຮອງຢ່າງມີຈຸດສຸມ ບົນຈິດໃຈປະຢັດເຮັດໃຫ້ການນໍາໃຊ້ງົບປະມານເກີດປະໂຫຍດສູງສຸດ ໃຫ້ແກ່ການພັດທະນາ, ເພີ່ມທະວີປະຕິບັດລະບຽບການປະມູນ ຈັດຊື້ຢ່າງເຂັ້ມງວດ, ຈັດບູລິມະສິດໜ້າວຽກໃຫ້ມີແຜນງານ, ໂຄງການ, ແຜນຄົນ ແລະ ແຜນງົບປະມານຢ່າງຊັດເຈນ ຈັດຕັ້ງປະຕິບັດຢ່າງໂປ່ງໃສ ແລະ ສາມາດຕິດຕາມກວດສອບໄດ້ໃນທຸກຂັ້ນຕອນ.
2. ທຸກຫົວໜ່ວຍງົບປະມານຂອງລັດ ນໍາໃຊ້ງົບປະມານຂອງລັດ ໃນແຕ່ລະຮ່ອງລາຍຈ່າຍຢ່າງປະຢັດ ແລະ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກໍານົດໄວ້ໂດຍສຸມໃສ່ດັ່ງນີ້:

   ເອົາໃຈໃສ່ຢ່າງເຂັ້ມງວດໃນການກວດກາຄືນ ຈໍານວນພະນັກງານ-ລັດຖະກອນທີ່ມີຕົວຈິງ, ການຈ່າຍເງິນອຸດໜູນ ແລະ ເງິນນະໂຍບາຍຕ່າງໆ ເປັນຕົ້ນເງິນອຸດໜູນເຂດຫ່າງໄກສອກຫຼີກ, ເງິນນະໂຍບາຍລູກ, ເງິນນະໂຍບາຍເມຍ, ເງິນນະໂຍບາຍເພີ່ມໂມງຂອງຂະແໜງການຕ່າງໆ (ຫຼີກເວັ້ນການລົງຊື່ , ລົງທະບຽນໃຫ້ກັນ ແຕ່ບໍ່ມີໜ້າເຮັດວຽກຕົວຈິງຢ່າງເດັດຂາດ; ຖ້າບໍ່ມີໜ້າເຮັດວຽກຕົວຈິງບໍ່ໃຫ້ຄິດໄລ່ໃຫ້), ຮັບປະກັນການຈັດຕັ້ງປະຕິບັດຖືກຕ້ອງຕາມກົດໝາຍ ແລະ ລະບຽບການກໍານົດ, ບໍ່ໃຫ້ມີການຈ່າຍຊໍ້າຊ້ອນ, ຈ່າຍເກີນ ແລະ ຈ່າຍເງິນເດືອນໃຫ້ບຸກຄົນທີ່ບໍ່ມີໜ້າຕົວຈິງຢ່າງເດັດຂາດ.

## ໝວດທີ 3

## ການຄຸ້ມຄອງນໍາໃຊ້ງົບປະມານລາຍຈ່າຍຮ່ອງຕ່າງໆດ້ວຍທຶນຂອງລັດ

**ມາດຕາ 6 ການໃຊ້ຈ່າຍກອງປະຊຸມ.**

1. ການຈັດກອງປະຊຸມສໍາມະນາ ແລະ ຝຶກອົບຮົມຕ່າງໆ ແມ່ນໃຫ້ເລືອກນໍາໃຊ້ສະຖານທີ່ປະຊຸມເໝາະສົມກັບກອງປະຊຸມ ໂດຍການນໍາໃຊ້ສະຖານທີ່ຂອງສໍານັກງານອົງການຂອງຕົນເປັນຕົ້ນຕໍ, ຈໍາກັດການໄປເຊົ່າສະຖານທີ່ປະຊຸມທີ່ມີລາຄາໃຊ້ຈ່າຍສູງ ແລະ ບໍ່ເປັນການປະຢັດ.

2. ການຈັດກອງປະຊຸມສະຫຼຸບວຽກງານປະຈຳປີຂອງບັນດາພະແນກການ, ຂະແໜງການ ແລະ ທ້ອງຖິ່ນແມ່ນໃຫ້ຈັດຕາມຄວາມຈຳເປັນຂອງວຽກງານ, ກຳນົດເວລາໃຫ້ສັດເຈນ ແລະ ໂດຍໄດ້ຮັບອະນຸມັດຈາກອຳນາດການປົກຄອງແຂວງ, ເມືອງ; ເລືອກເຟັ້ນເປົ້າໝາຍຜູ້ເຂົ້າຮ່ວມ, ຄັດເລືອກສະເພາະຂະແໜງການທີ່ຕິດພັນກັບວຽກງານຕົ້ນເປັນຫຼັກ ໂດຍການນຳໃຊ້ງົບປະມານຢ່າງປະຢັດ, ສອດຄ່ອງກັບກຳນົດໝາຍໃຊ້ຈ່າຍງົບປະມານບໍລິຫານຂອງລັດທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 7 ການໃຊ້ຈ່າຍງົບປະມານຮັບແຂກ.**

ການນຳໃຊ້ງົບປະມານຂອງລັດເພື່ອຕ້ອນຮັບແຂກພາຍໃນ ແລະ ຕ່າງປະເທດທີ່ມາພົບປະຢ້ຽມຢາມເຮັດວຽກຢູ່ພາຍໃນແຂວງ ຕ້ອງໄດ້ປະຕິບັດຕາມຂໍ້ຕົກລົງ ຂອງລັດຖະມົນຕີກະຊວງການເງິນເລກທີ 2066/ ກງ ວ່າດ້ວຍກຳນົດໝາຍໃຊ້ຈ່າຍງົບປະມານບໍລິຫານຂອງລັດ ຢ່າງເຄັ່ງຄັດ, ເວລາມີກອງປະຊຸມສະຫຼຸບວຽກງານໃດໜຶ່ງ ບໍ່ໃຫ້ມີການຈັດງານລ້ຽງສ້າງສັນ ທີ່ເປັນການສິ້ນເປືອງງົບປະມານ. ງານບຸນປະເພນີ, ບຸນປີໃໝ່ລາວ, ປີໃໝ່ສາກົນ ແລະ ວັນບຸນສຳຄັນຕ່າງໆ ບໍ່ໃຫ້ນຳໃຊ້ງົບປະມານຂອງລັດຊື້ກະຕ່າຂອງຂວັນ, ຂອງຕ້ອນ ທີ່ມີລາຄາແພງນຳເຂົ້າຈາກຕ່າງປະເທດ, ການຊື້ຂອງຂວັນໃຫ້ແຂກພາຍໃນ ແລະ ຕ່າງປະເທດຕ້ອງນຳໃຊ້ຜະລິດຕະພັນພາຍໃນທີ່ເປັນເອກະລັກຂອງທ້ອງຖິ່ນ ເປັນການສົ່ງເສີມການນຳໃຊ້ສິນຄ້າ ໜຶ່ງເມືອງໜຶ່ງຜະລິດຕະພັນ ເພື່ອຊຸກຍູ້ເຮັດໃຫ້ເກີດມີການຜະລິດພາຍໃນໃຫ້ຫຼາຍຂຶ້ນ, ສຳລັບງານລ້ຽງ ແລະ ງານຕ້ອນຮັບແຂກຖ້າມີຄວາມຈຳເປັນໃຫ້ໃຊ້ເຄື່ອງດື່ມທີ່ຜະລິດຢູ່ພາຍໃນເຊັ່ນ: ເຫຼົ້າຂາວ. ບັນດາສຳນັກງານ, ອົງການຂອງລັດພາຍໃນແຂວງ ໃຫ້ຫັນມາໃຊ້ເຄື່ອງດື່ມ-ເຄື່ອງບຳລຸງທີ່ເປັນຜະລິດຕະພັນພາຍໃນແຂວງ, ເມືອງ, ບ້ານທີ່ມີແລ້ວ.

**ມາດຕາ 8 ການໃຊ້ຈ່າຍໄປວຽກທາງການ.**

1. ການໄປເຄື່ອນໄຫວວຽກງານທາງລັດຖະການ ຢູ່ພາຍໃນ, ຕ່າງແຂວງ ຫຼື ຕ່າງປະເທດ ຕ້ອງຄົ້ນຄ້ວາເອົາໜ້າວຽກທີ່ມີຄວາມຈຳເປັນ, ມີເປົ້າໝາຍ ແລະ ຈຸດສຸມໂດຍມີການກຳນົດແຜນວຽກ, ແຜນເງິນ, ກຳນົດຈຳນວນຄົນ, ນຳໃຊ້ພາຫະນະຢ່າງຈຳກັດຫຼາຍຄົນໄປຮ່ວມກັນຄັນດຽວ ຍົກເວັ້ນແຕ່ການນຳຂັ້ນແຂວງ, ຂັ້ນເມືອງ, ກຳມະການພັກແຂວງຂຶ້ນໄປແມ່ນໃຫ້ນຳໃຊ້ພາຫະນະການເດີນທາງ ຕາມຄວາມເໝາະສົມຕາມຕຳແໜ່ງ.
2. ຫາກມີການກຳນົດຮ່ວງໃຊ້ຈ່າຍງົບປະມານຮອງຮັບໃສ່ຂໍ້ຕົກລົງ ແລະ ແຈ້ງການລະອຽດແລ້ວ ບໍ່ໃຫ້ຫົວໜ່ວຍງົບປະມານຂັ້ນຕົ້ນ ຄິດໄລ່ແຜນໃຊ້ຈ່າຍຊ້ຳຊ້ອນຕື່ມອີກ (ເຊັ່ນ: ໃນເມື່ອຄິດໄລ່ຢູ່ແຂວງແລ້ວ ເວລາລົງໄປເມືອງແມ່ນບໍ່ໃຫ້ເມືອງຈ່າຍຕື່ມ).
3. ການໄປເຄື່ອນໄຫວທາງລັດຖະການຢູ່ຕ່າງປະເທດ ຕ້ອງມີການເລືອກເຟັ້ນຫົວຂໍ້ການສຳມະນາ, ຝຶກອົບຮົມ ແລະ ກອງປະຊຸມທີ່ຈຳເປັນເທົ່ານັ້ນ, ຈຳກັດຈຳນວນຜູ້ເຂົ້າຮ່ວມໂດຍການເລືອກເຟັ້ນເອົາຜູ້ທີ່ມີການພົວພັນວຽກງານໂດຍກົງ ເພື່ອຮັບປະກັນໃຫ້ແກ່ວຽກງານດັ່ງກ່າວມີປະສິດທິຜົນສູງ ພ້ອມທັງເປັນການປະຢັດງົບປະມານ.
4. ການກຳນົດແຜນໃຊ້ຈ່າຍງົບປະມານ ເພື່ອເຄື່ອນໄຫວວຽກທາງລັດຖະການ ຂັ້ນແຂວງລົງເຮັດວຽກຢູ່ເມືອງ, ເມືອງຫາແຂວງ, ເມືອງຫາເມືອງ ການຄິດໄລ່ອັດຕາກິນ, ຄ່າພັກເຊົາດັ່ງນີ້:

| ລ/ດ | ຕຳແໜ່ງ | ອັດຕາກິນ/ ຄົນ/ວັນ | ຄ່າພັກເຊົ່າ/ ຄົນ/ວັນ | ໝາຍ ເຫດ |
|---|---|---|---|---|
| 1 | ເຈົ້າແຂວງ | 100.000 | 190.000 | |
| 2 | ຮອງເຈົ້າແຂວງ,ຮອງເລຂາ,ປະທານສະພາປະຊາຊົນແຂວງ. | 100.000 | 180.000 | |
| 3 | ຮອງປະທານສະພາປະຊາຊົນແຂວງ, ຄະນະປະຈຳພັກແຂວງ. | 100.000 | 170.000 | |
| 4 | ປະທານຄະນະກຳມະການສະພາປະຊາຊົນແຂວງ, ຫົວໜ້າພະແນກ, ອົງການທຽບເທົ່າ, ເຈົ້າເມືອງທີ່ເປັນກຳມະການພັກແຂວງ. | 100.000 | 160.000 | |
| 5 | ຮອງປະທານຄະນະກຳມະການສະພາປະຊາຊົນແຂວງ, ຫົວໜ້າພະແນກການ, ອົງການທຽບເທົ່າ, ເຈົ້າເມືອງ ທີ່ບໍ່ເປັນກຳມະການພັກແຂວງ. | 100.000 | 150.000 | |
| 6 | ຮອງຫົວໜ້າພະແນກການ, ຮອງອົງການທຽບເທົ່າ, ຮອງເຈົ້າເມືອງ. | 100.000 | 140.000 | |
| 7 | ຫົວໜ້າຫ້ອງການ, ຫົວໜ້າອົງການທຽບເທົ່າລົງໄປ. | 100.000 | 130.000 | |

5. ການໄປເຄື່ອນໄຫວອອກວຽກງານວິຊາສະເພາະຢູ່ພາຍໃນເທດສະບານແຂວງ, ເທດສະບານເມືອງ, ບ້ານທີ່ສາມາດໄປ-ກັບ ໄດ້ ແມ່ນບໍ່ໃຫ້ຄິດໄລ່ເງິນອັດຕາກິນ ຖືວ່າເປັນການປະຕິບັດໜ້າທີ່ໃນໂມງລັດຖະການປົກກະຕິ, ກໍລະນີຢູ່ເຂດຊານເມືອງ ທີ່ຫ່າງໄກສອກຫຼີກ ບໍ່ສາມາດໄປ-ກັບໄດ້ໃຫ້ຄິດໄລ່ອັດຕາກິນ 50.000 ກີບ/ ຄົນ/ວັນ.
6. ພະນັກງານລົງກໍ່ສ້າງຮາກຖານການເມືອງຢູ່ເມືອງ,ບ້ານທີ່ເປັນຂະບວນການ ໃຫ້ຄິດໄລ່ອັດຕາກິນ 35.000 ກີບ/ຄົນ/ວັນ.
7. ການຈັດຕັ້ງປະຕິບັດຕົວຈິງ ແມ່ນໃຫ້ອີງໃສ່ຄວາມເໝາະສົມ ຕາມສະພາບເງື່ອນໄຂ ແລະ ງົບປະມານທີ່ໄດ້ຮັບອານຸມັດຕົວຈິງຢູ່ແຕ່ລະຂະແໜງການທ້ອງຖິ່ນ, ແຕ່ສູງສຸດບໍ່ໃຫ້ເກີນຕາມອັດຕາທີ່ໄດ້ຄິດໄລ່ໄວ້ຂ້າງເທິງນັ້ນ.

**ມາດຕາ 9 ການໃຊ້ຈ່າຍງົບປະມານໃນວັນສຳຄັນຂອງພັກ, ຂອງຊາດ ແລະ ບຸນປະເພນີ.**

ເວລາມີການຈັດງານບຸນສຳຄັນຂອງພັກ-ຂອງຊາດ, ການຕ້ອນຮັບແຂກການນຳຂັ້ນສູງ, ແຂກຕ່າງປະເທດທີ່ມາຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງ, ບຸນປະເພນີຢູ່ຂັ້ນແຂວງ ແລະ ເມືອງ ບໍ່ໃຫ້ຄິດໄລ່ເງິນອັດຕາກິນ, ເງິນນໍ້າມັນ ຂອງພາກສ່ວນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ແພດໝໍ, ຄູ ແລະ ພາກສ່ວນເນື້ອໃນ, ພິທີການຮັບແຂກ, ພະນັກງານຊ່ວຍວຽກ, ພະນັກງານທີ່ເຮັດວຽກວິຊາສະເພາະກ່ຽວຂ້ອງອື່ນໆ ໃຫ້ຖືເປັນວຽກຄວາມຮັບຜິດຊອບໜ້າທີ່ການເມືອງ ແລະ ຄວາມຮັບຜິດຊອບດ້ານວິຊາສະເພາະປົກກະຕິ ໂດຍມອບໝາຍຂາດຕົວໃຫ້ຄະນະນຳແຕ່ລະຂັ້ນ ສຶກສາອົບຮົມການເມືອງແນວຄິດ ໃຫ້ພະນັກງານໃນຄວາມຮັບຜິດຊອບການຄຸ້ມຄອງຂອງຕົນ. ຍົກເວັ້ນສະເພາະການປ້ອງກັນພາຍໃນຂອບເຂດການຈັດງານຂອງກອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທີ່ເຮັດວຽກຮອດຕອນກາງຄືນຈະໄດ້ຄິດໄລ່ເງິນນະໂຍບາຍໃຫ້ 35,000 ກີບ/ຄົນ/ຄືນ.

**ມາດຕາ 10 ການນຳໃຊ້ງົບປະມານໃນການຈັດຊື້ດ້ວຍທຶນຂອງລັດ.**

1. ນຳໃຊ້ເຄື່ອງໃຊ້ຫ້ອງການ, ວັດຖຸ, ອຸປະກອນ ແລະ ເຟີນິເຈີທີ່ມີຢູ່ແລ້ວຢ່າງຄຸ້ມຄ່າ ແລະ ໃຫ້ເກີດປະໂຫຍດສູງສຸດ ໂດຍຈຳກັດການຊື້ໃໝ່ທີ່ບໍ່ຈຳເປັນ, ໃນກໍລະນີມີຄວາມຈຳເປັນໃນການຈັດຊື້ໃໝ່ ຕ້ອງ

ປະຕິບັດຕາມກົດໝາຍ ແລະ ລະບຽບການປະມູນຈັດຊື້ດ້ວຍທຶນຂອງລັດຢ່າງເຂັ້ມງວດ. ສໍາລັບການຈັດຊື້ເຟີນິເຈີຮັບໃຊ້ຫ້ອງການ ຕ້ອງນໍາໃຊ້ຜະລິດຕະພັນທີ່ຜະລິດຢູ່ພາຍໃນປະເທດທີ່ມີຄຸນນະພາບ ແລະ ລາຄາເທົ່າທຽມກັນກັບຜະລິດຕະພັນຕ່າງປະເທດ ທີ່ຈໍາໜ່າຍຢູ່ພາຍໃນປະເທດ ແຕ່ບໍ່ໃຫ້ເປັນປະເພດຫຼູຫຼາ, ຟຸມເຟືອຍ ແລະ ມີລາຄາສູງ.

2. ການຈັດຊື້ໃໝ່ພາຫະນະຮັບໃຊ້ບໍລິຫານ ດ້ວຍງົບປະມານຂອງລັດນັບແຕ່ປີ 2018 ເປັນຕົ້ນໄປແມ່ນໃຫ້ໂຈະຊົ່ວຄາວຈົນກວ່າຈະມີແຈ້ງການຈາກລັດຖະບານ, ໂດຍໃຫ້ຈັດສັນ ແລະ ນໍາໃຊ້ພາຫະນະທີ່ມີຢູ່ແລ້ວຮັບໃຊ້ເຂົ້າໃນວຽກງານທາງລັດຖະການ.

3. ການສ້ອມແປງພາຫະນະຂອງລັດແຕ່ລະປະເພດ ຕ້ອງຜ່ານການປະມູນ ຫຼື ທາບທາມສົມທຽບລາຄາ ພ້ອມທັງມີການຄຸ້ມຄອງ ແລະ ຕິດຕາມກວດກາຂອງຂະແໜງການກ່ຽວຂ້ອງຢ່າງເຂັ້ມງວດ. ສໍາລັບຄ່າໃຊ້ຈ່າຍການສ້ອມແປງ ນອກຈາກການສ້ອມແປງປົກກະຕິ ຕາມກໍານົດເວລາດ້ານເຕັກນິກ ຫຼື ການເປ່ເພທີ່ເກີດຈາກການນໍາໃຊ້ວຽກສ່ວນຕົວຖ້າມີການເປ່ເພ, ມີຜົນເສຍຫາຍຫຼາຍ ແລະ ມີການກະທໍາໂດຍເຈດຕະນາ ແມ່ນໃຫ້ບຸກຄົນທີ່ນໍາໃຊ້ພາຫະນະນັ້ນ ຮັບຜິດຊອບຄ່າໃຊ້ຈ່າຍເອງ.

**ມາດຕາ 11 ການໃຊ້ຈ່າຍຄ່າບໍລິການດ້ວຍທຶນຂອງລັດ.**

1. ຊົມໃຊ້ໄຟຟ້າ, ນໍ້າປະປາ, ອຸປະກອນການສື່ສານຕ່າງໆ (ໂທລະສັບ, ອິນເຕີເນັດ, ແຟັກ...) ຢ່າງປະຢັດ ແລະ ໃຫ້ມີການກວດກາ, ຕິດຕາມໃບບິນໃນແຕ່ລະເດືອນຢ່າງເຄັ່ງຄັດ ເພື່ອສົມທຽບຄວາມຜິດປົກກະຕິຂອງຄ່າກະແສໄຟຟ້າ, ນໍ້າປະປາ, ອຸປະກອນສື່ສານຕ່າງໆ ເພື່ອຊອກຫາສາເຫດ ແລະ ແກ້ໄຂໃຫ້ທັນເວລາ, ຈັດສັນງົບປະມານຊໍາລະ ແລະ ຮັບປະກັນບໍ່ໃຫ້ເກີດເປັນໜີ້ສິນສະສົມໃນແຕ່ລະປີ.

2. ກວດກາການນໍາໃຊ້ພະລັງງານໄຟຟ້າຢ່າງເຄັ່ງຄັດ ແລະ ໃຫ້ແທດເໝາະກັບສະພາບຕົວຈິງເປັນຕົ້ນ: ການຕິດຕັ້ງ ແລະ ນໍາໃຊ້ອຸປະກອນໄຟຟ້າຢູ່ຕາມຕຶກອາຄານ ສໍານັກງານອົງການຂອງລັດ, ໂຮງໝໍ, ໂຮງຮຽນ, ໄຟເບື້ອງທາງ, ສະຖານທີ່ສາທາລະນະ ແລະ ບໍລິການຕ່າງໆ.

**ມາດຕາ 12 ການນໍາໃຊ້ເງິນດັດສົມ-ສິ່ງເສີມ.**

ລາຍຈ່າຍດັດສົມ-ສິ່ງເສີມໃຫ້ກວດກາຄືນບັນດາກິດຈະກໍາ ແລະ ແຜນການເຄື່ອນໄຫວວຽກງານທີ່ເຫັນວ່າບໍ່ຈໍາເປັນ ແລະ ຮັບປະກັນບໍ່ໃຫ້ຊໍ້າຊ້ອນກັບລາຍຈ່າຍບໍລິຫານປົກກະຕິ ເປັນຕົ້ນການຈັດສໍາມະນາ, ຝຶກອົບຮົມ, ກອງປະຊຸມຕ່າງໆ ແລະ ການໄປເຄື່ອນໄຫວວຽກງານທາງລັດຖະການ ຢູ່ພາຍໃນປະເທດ ຊຶ່ງໃນໄລຍະຜ່ານມາເຫັນວ່າມີການຈ່າຍຊໍ້າຊ້ອນ ກັບລາຍຈ່າຍບໍລິຫານປົກກະຕິ ແລະ ຍັງມີລັກສະນະຟຸມເຟືອຍຫຼາຍ.

**ມາດຕາ 13 ການນໍາໃຊ້ເງິນບໍລິຫານວິຊາການ.**

ລາຍຈ່າຍບໍລິຫານວິຊາການຕ້ອງສັງລວມ ເຂົ້າໃນແຜນລາຍຈ່າຍງົບປະມານຂອງອົງການທີ່ກ່ຽວຂ້ອງທີ່ສະພາແຫ່ງຊາດຮັບຮອງໃນແຕ່ລະປີ, ຕ້ອງນໍາໃຊ້ຢ່າງປະຢັດ ແລະ ໃຫ້ສະສົມສ່ວນທີ່ເຫຼືອຈາກການໃຊ້ຈ່າຍເຂົ້າໃນວຽກງານນັ້ນໆ ເພື່ອນໍາໃຊ້ເຂົ້າໃນເປົ້າໝາຍອື່ນ ທີ່ນອນໃນແຜນລາຍຈ່າຍງົບປະມານບໍລິຫານປົກກະຕິປະຈໍາປີ ແລະ ສາມາດຄາດຄະເນຫຼຸດຜ່ອນແຜນລາຍຈ່າຍງົບປະມານ ບໍລິຫານຂອງຂະແໜງການຕົນໃນປີຕໍ່ໄປ.

**ມາດຕາ 14 ການລົງທຶນຂອງລັດໃຫ້ປະຕິບັດດັ່ງນີ້.**

1. ກວດຄືນທຸກໆໂຄງການລົງທຶນຂອງລັດ ໃນຄວາມຮັບຜິດຊອບຂອງຕົນ, ຕັດສິນໜ້າວຽກຕ່າງໆ ຂອງໂຄງການລົງທຶນຂອງຂະແໜງການຂັ້ນແຂວງ ແລະ ເມືອງ ເພື່ອເຮັດໃຫ້ມູນຄ່າລວມຂອງການລົງທຶນ ເໝາະສົມກັບແຜນງົບປະມານລົງທຶນ ທີ່ຄາດຄະເນຈະໄດ້ຮັບໃນ 2-3 ປີຕໍ່ໜ້າ, ແຕ່ງຕັ້ງຄະນະ ເພື່ອກວດກາຄືນມູນຄ່າໂຄງການຂະໜາດກາງ ແລະ ໃຫຍ່ໃຫ້ຖືກຕາມມູນຄ່າຕົວຈິງ ເປັນຕົ້ນມູນຄ່າໂຄງການນອກແຜນທີ່ຍັງຄ້າງຊໍາລະໃນປະຈຸບັນ. ຢຸດຕິໂຄງການນອກແຜນຢ່າງຂາດຕົວ, ຢຸດຕິໂຄງການທີ່ບໍ່ມີການປະເມີນຜົນຕາມກົດໝາຍກໍານົດ ແລະ ໂຄງການທີ່ມີປະສິດທິຜົນຕໍ່າ.
2. ທຸກໆໂຄງການລົງທຶນຂອງລັດຕ້ອງປະຕິບັດການຄັດເລືອກ, ປະມູນຕາມກົດໝາຍ ແລະ ລະບຽບການກໍານົດຢ່າງເຂັ້ມງວດ, ມີການປະເມີນມູນຄ່າໂຄງການຕາມກໍານົດໝາຍເຕັກນິກ, ມາດຖານເຕັກນິກ ແລະ ລາຄາຫົວໜ່ວຍຂອງແຕ່ລະຂະແໜງການ ວາງອອກຢ່າງເຄັ່ງຄັດ, ບໍ່ໃຫ້ມອບໂຄງການໃດໜຶ່ງໃຫ້ບໍລິສັດ ໂດຍບໍ່ຜ່ານການປະມູນ ແລະ ເຂັ້ມງວດໃນການປະຕິບັດຫົວໜ່ວຍລາຄາແຕ່ລະປະເພດການກໍ່ສ້າງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.
3. ປະຕິບັດດໍາລັດຂອງລັດຖະບານວ່າ ດ້ວຍການຕິດຕາມ-ກວດກາ ໂຄງການການລົງທຶນຂອງລັດ ເລີ່ມແຕ່ຫົວທີ ເພື່ອຮັບປະກັນການນໍາໃຊ້ທຶນໃຫ້ຖືກຕ້ອງ, ປະຢັດ, ໂປ່ງໃສ, ມີປະສິດທິຜົນ ແລະ ຮັບປະກັນຄຸນນະພາບຂອງໂຄງການ.
4. ນໍາໃຊ້ທຶນກູ້ຢືມ ແລະ ທຶນຊ່ວຍເຫຼືອລ້າຈາກຕ່າງປະເທດ ເຂົ້າໃນການຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການຢ່າງມີປະສິດທິຜົນ ແລະ ປະຕິບັດບັນດາເງື່ອນໄຂຂອງຜູ້ໃຫ້ທຶນ ແລະ ລະບຽບການຄຸ້ມຄອງການເງິນລວມສູນງົບປະມານຢ່າງເຄັ່ງຄັດ.

**ມາດຕາ 15 ການນໍາໃຊ້ຊັບສິນບັດຂອງລັດ (ສິ່ງປຸກສ້າງ).**

ໃຫ້ນໍາໃຊ້ສໍານັກງານ, ຫ້ອງການທີ່ມີຢູ່ໃຫ້ເກີດປະໂຫຍດສູງສຸດ ໃນໄລຍະປີງົບປະມານ 2017-2020 ບໍ່ອະນຸຍາດໃຫ້ປຸກສ້າງສໍານັກງານ, ຫ້ອງການໃໝ່ ຍົກເວັ້ນກໍລະນີທີ່ຈໍາເປັນແຕ່ຕ້ອງໄດ້ສະເໜີເຂົ້າແຜນງົບປະມານປະຈໍາປີ ໂດຍຜ່ານສະພາປະຊາຊົນຂັ້ນແຂວງຕາມກົດໝາຍ.

**ມາດຕາ 16 ການກໍານົດຫົວໜ່ວຍລາຄາການກໍ່ສ້າງ ປະເພດຕ່າງໆ ແລະ ກໍານົດມາດຖານເຕັກນິກ ການນໍາໃຊ້ພະລັງງານໄຟຟ້າ.**

- ພະແນກໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການສົມທົບກັບພະແນກການ ທີ່ມີໂຄງການກໍ່ສ້າງ ແລະ ຄົ້ນຄ້ວາກໍານົດຫົວໜ່ວຍລາຄາການກໍ່ສ້າງ ປະເພດຕ່າງໆ ໃນແຕ່ລະໄລຍະ ກໍານົດມາດຖານຂອງອາຄານ ສໍານັກງານ ຫ້ອງການ, ໂຮງຮຽນ, ໂຮງໝໍ, ກໍານົດມາດຖານຂອງຫົນທາງ, ທາງຍ່າງ, ການຕິດປ້າຍບອກທາງ ຢູ່ຂັ້ນແຂວງ ແລະ ເມືອງໃຫ້ຖືກຕ້ອງຕາມກົດໝາຍ ເພື່ອປະຢັດລາຍຈ່າຍງົບປະມານທີ່ຜ່ານມາ ເປັນຫົວໜ່ວຍຄິດໄລ່ສູງ ບໍລິມາດວຽກໜ້ອຍ ປະລິມານຫຼາຍ, ຄຸນນະພາບຕໍ່າ.

- ພະແນກພະລັງງານ ແລະ ບໍ່ແຮ່ ຄົ້ນຄ້ວາກໍານົດມາດຖານເຕັກນິກ ການນໍາໃຊ້ພະລັງງານໄຟຟ້າ ເປັນການກວດກາຄືນ ລະບົບການຕິດຕັ້ງ, ການນໍາໃຊ້ອຸປະກອນໄຟຟ້າທີ່ມີຄຸນນະພາບ ແລະ ປະຢັດພະລັງງານໄຟຟ້າ ຕາມສໍານັກງານອົງການລັດ ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ ເພື່ອລຸດຜ່ອນລາຍຈ່າຍຄ່າກະແສໄຟຟ້າ.

- ອົງການພັດທະນາ ແລະ ບໍລິຫານຕົວເມືອງ, ຫ້ອງວ່າການປົກຄອງເມືອງ ສົມທົບກັບບໍລິສັດລັດວິສາຫະກິດໄຟຟ້າສາຂາແຂວງ ແລະ ໜ່ວຍບໍລິການໄຟຟ້າຢູ່ບັນດາເມືອງ ກວດກາລະບົບ

ຄວບຄຸມການເປີດ-ປິດໄຟຟ້າເບື້ອງທາງໃຫ້ຖືກຕ້ອງກັບເວລາທີ່ໄດ້ກຳນົດໄວ້(ບໍ່ໃຫ້ເປີດແກ່ຍາວເວລາສອຍເກີນໄປ).

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 17 ຂໍ້ຫ້າມ.**

1. ຫ້າມບໍ່ໃຫ້ພະແນກການ, ສະພາປະຊາຊົນ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ທະຫານ, ຕຳຫຼວດ, ອົງການທຽບເທົ່າ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອຳນວຍການ ລັດວິສາຫະກິດ, ບັນດາເມືອງພາຍໃນແຂວງ ຂຶ້ນແຜນຄິດໄລ່ອັດຕາກິນ, ຄ່າພັກເຊົາ, ນ້ຳມັນລົດ ແລະ ງົບປະມານຮ່ວງອື່ນໆສູງກວ່າຂໍ້ຕົກລົງສະບັບນີ້.
2. ຫ້າມມີພຶດຕິກຳສ້າງວຽກຂຶ້ນໃໝ່ ແລະ ສ້າງເອກະສານຂໍຖອນເງິນ ໃຫ້ໝົດຕາມແຜນງົບປະມານທີ່ໄດ້ຮັບການແບ່ງປັນທັງທີ່ບໍ່ມີຄວາມຈຳເປັນ, ຫ້າມຈ່າຍງົບປະມານທີ່ໄດ້ຮັບອານຸມັດເກີນແຜນປະຈຳປີຂອງຕົນ ຊຶ່ງເຮັດໃຫ້ເກີດເປັນໜີ້ສິນບໍລິຫານສະສົມເພີ້ມຂຶ້ນ.
3. ຫ້າມບໍ່ໃຫ້ພະແນກການ, ສະພາປະຊາຊົນ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ທະຫານ, ຕຳຫຼວດ, ອົງການທຽບເທົ່າ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອຳນວຍການ ລັດວິສາຫະກິດ, ບັນດາເມືອງພາຍໃນແຂວງ ສ້າງກຳນົດໝາຍໃຊ້ຈ່າຍຂອງຕົນເອງຕ່າງຫາກທີ່ຂັດກັບຂໍ້ຕົກລົງສະບັບນີ້.
4. ຫ້າມພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ຄິດໄລ່ເງິນນະໂຍບາຍຊົ່ວໂມງເພີ້ມໃຫ້ພະນັກງານຜູ້ທີ່ບໍ່ໄດ້ເຮັດໜ້າທີ່ສິດສອນຕົວຈິງ.
5. ຫ້າມພະແນກສາທາລະນະສຸກແຂວງ, ໂຮງໝໍແຂວງ, ຫ້ອງການສາທາລະນະສຸກເມືອງ, ໂຮງໝໍເມືອງ( ສຸກສາລາ ) ຄິດໄລ່ເງິນເວນຍາມໃຫ້ພະນັກງານທີ່ບໍ່ໄດ້ເຮັດໜ້າທີ່ເວນຍາມຄົນເຈັບຕົວຈິງ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 18 ນະໂຍບາຍຕໍ່ຜູ້ມີຜົນງານ.**

ພະແນກການ, ສະພາປະຊາຊົນ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ທະຫານ, ຕຳຫຼວດ, ອົງການທຽບເທົ່າ, ແນວລາວສ້າງປ, ອົງການຈັດຕັ້ງມະຫາຊົນ, ອຳນວຍການລັດວິສາຫະກິດ , ບັນດາເມືອງພາຍໃນແຂວງ ແລະ ບຸກຄົນທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆ ຕາມລະບຽບການ.

**ມາດຕາ 19 ມາດຕະການຕໍ່ຜູ້ລະເມີດ.**

ພະແນກການ, ສະພາປະຊາຊົນ, ສານປະຊາຊົນ, ອົງການໄອຍະກາປະຊາຊົນນ, ທະຫານ, ຕຳຫຼວດ, ອົງການທຽບເທົ່າ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອຳນວຍການລັດວິສາຫະກິດ, ບັນດາເມືອງພາຍໃນແຂວງ ແລະ ບຸກຄົນທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ ແລະ ເສດຖະກິດຂອງຊາດ ຈະຖືກສຶກສາອົບຮົມ, ກ່າວ

ເຕືອນ, ລົງວິໄນ ຫຼື ດຳເນີນຄະດີຕາມກົດໝາຍ ຕາມກໍລະນີເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 20 ວ່າດ້ວຍການຈັດຕັ້ງປະຕິບັດ.**

1. ພະແນກການ, ສະພາປະຊາຊົນ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ກອງບັນຊາການທະຫານ, ກອງບັນຊາການ ປກສ ແຂວງ, ອົງການທຽບເທົ່າ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ລັດວິສາຫະກິດ ແລະ ບັນດາເມືອງໃນທົ່ວແຂວງ ເອົາໃຈ ໃສ່ ຈັດຕັ້ງປະຕິບັດແຜນລາຍຈ່າຍງົບປະມານ ເຂົ້າໃນການເຄື່ອນໄຫວວຽກງານກິດຈະການຕ່າງໆ ທີ່ບໍ່ຈຳເປັນເພື່ອປະຢັດງົບປະມານ.
2. ມອບໃຫ້ພະແນກການ, ສະພາປະຊາຊົນ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ກອງບັນຊາການທະຫານ, ກອງບັນຊາການ ປກສ ແຂວງ, ອົງການທຽບເທົ່າ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ລັດວິສາຫະກິດ ແລະ ບັນດາເມືອງໃນທົ່ວແຂວງ ເປັນເຈົ້າການຮັບຜິດຊອບຊີ້ນຳການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໄດ້ເຜີຍແຜ່ເຊື່ອມຊຶມໃຫ້ພະ ນັກງານ-ລັດຖະກອນ, ທະຫານ, ຕຳຫຼວດຢ່າງເລິກເຊິ່ງ ແລະ ທົ່ວເຖິງ.
3. ມອບໃຫ້ພະແນກກວດກາລັດແຂວງ ເປັນເຈົ້າການປະສານສົມທົບກັບຂະແໜງການກ່ຽວຂ້ອງ ຕິດຕາມກວດກາການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.
4. ຂໍ້ຕົກລົງສະບັບນີ້ແມ່ນນຳໃຊ້ສະເພາະຢູ່ພາຍໃນແຂວງ, ບັນຫາໃດທີ່ບໍ່ໄດ້ກຳນົດໄວ້ໃນຂໍ້ຂໍ້ຕົກລົງສະບັບນີ້ແມ່ນໃຫ້ປະຕິບັດຕາມລະບຽບ, ກົດໝາຍທີ່ໄດ້ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 21 ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ພົງສະຫວັນ ສິດທະວົງ